# ຈະເກີດຫຍັງຂຶ້ນກັບກາ ກວດເຊັກ ຂອງທ່ານ?



## ຜູ້ໃຫ້ບໍລິການຂອງທ່ານຈະ ກວດເຊັກດັ່ງຕໍ່ໄປນີ້:

- ກວດເຊັກຮ່າງກາຍ
- ກວດເຊັກການເຕີບໂຕ ແລະ ພັດທະນາການ
- ຊັກຖາມກ່ຽວກັບປະຫວັດດ້ານສຸຂະພາບຂອງຄອບຄົວຂອງທ່ານ
- ໃຫ້ການສັກຢາຕາມການແນະນຳ, ເມື່ອເຫັນວ່າມີຄວາມຈຳເປັນ
- ປຶກສາກ່ຽວກັບສຸຂະພາບດ້ານທັນຕະກຳ ແລະ, ເມື່ອເຫັນວ່າມີຄວາມຈຳເປັນ, ໃຫ້ລູກຂອງທ່ານໃຊ້ສານຟລູໄລ ແລະ ຊ່ວຍຄົ້ນຫາທ່ານຫມໍປົວແຂ້ວ.
- ກວດເຊັກການໄດ້ຍິນ ແລະ ສານຕາຂອງທ່ານ
- ສອບຖາມກ່ຽວກັບສຸຂະພາບຈິດໃຈ ແລະ ສະຫວັດດີດ້ານຈິດໃຈຂອງທ່ານ, ແລະ ການຕິດເຫຼົ້າ ຫຼື ໃຊ້ຢາເສບຕິດ, ເພື່ອຊອກຫາວ່າຖ້າຫາກທ່ານຕ້ອງການຊັບພະຍາກອນ ຫຼື ການໃຫ້ການຊ່ວຍເຫຼືອ
- ປຶກສາຫົວຂໍ້ດ້ານສຸຂະພາບທີ່ສຳຄັນເຊັ່ນ: ສຸຂະພາບຈິດດ້ານເພດສຳພັນ, ໂພຊະນາການ, ຄວາມປອດໄພ, ແລະ ການປົກປ້ອງຜິວຫນັງຈາກແສງແດດ.

## ພ້ອມນັ້ນຜູ້ໃຫ້ບໍລິການຈະກວດເຊັກດັ່ງຕໍ່ໄປນີ້:

- **ໂລຊຶມເສົ້າ, ຄວາມໂມໂຫ, ແລະ ຄວາມສ່ຽງຕໍ່ການຂ້າຕົວຕາຍ**
- **ກວດພະຍາດອັບເສບປອດ (TB),** ຖ້າຫາກມີຄວາມສ່ຽງ
- **ລະດັບໄຂມັນ,** ຖ້າຫາກມີຄວາມສ່ຽງ
- **ນ້ຳປັດສະວະ,** ຖ້າຫາກມີຄວາມສ່ຽງ
- **ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ (STIs),** ຖ້າຫາກມີຄວາມສ່ຽງ
- **ບັນຫາດ້ານສຸຂະພາບຕ່າງໆ** ຫຼື ຄວາມກັງວົນໃຈທີ່ທ່ານມີ

*Laotian 2025: For teens and young adults age 12 to 21*

# ຖ້າຫາກທ່ານມີຄຳຖາມ ຫຼື ຢາກສຶກສາເພີ່ມເຕີມ

**ແຜນດູແລ້ດ້ານສຸຂພາບທີ່ໄດ້ຮັບການຄຸ້ມຄອງຂອງມະໂຍບາຍ Medi-Cal ຂອງທ່ານ**
ເບີໂທລະສັບຈະຕິດຢູ່ກັບບັດປະຈຳຕົວປະຈຳຂອງແຜນມະໂຍບາຍຂອງທ່ານ ແລະ ເວັບໄຊທ໌ຂອງແຜນຂອງທ່ານ ຫຼືໄປຍັງ www.dhcs.ca.gov/mmchpd

**ສາຍຕົງເພື່ອຂໍຄວາມຊ່ວຍເຫຼືອສະມາຊິກ Medi-Cal**
ໂທຫາເບີ **1-800-541-5555** (TDD 1-800-430-7077)
ຫຼືເຂົ້າໄປຍັງ www.dhcs.ca.gov/myMedi-Cal

**Medi-Cal Rx**
ໂທຫາເບີ, ໃນລັດ ຄາລີຟໍເນຍ **1-800-322-6384** (TTY 1-800-735-2922)
ຫຼືໄປຍັງ smilecalifornia.org ຫຼື www.dhcs.ca.gov/MCP

**ຊ່ຽວຊານດ້ານສຸຂະພາບຈິດ**
ໂທຫາ **1-888-452-8609**
ເພື່ອສອບຖາມກ່ຽວກັບການບໍລິການສະເພາະກໍລະນີສຸຂະພາບຈິດໃນຂັ້ນຮ້າຍແຮງ, ຕິດຕໍ່ຄະນະຄຸ້ມຄອງແຜນມະໂຍບາຍດ້ານສະະພາບຈິດໄດ້ທີ່ www.dhcs.ca.gov/CMHP

**ຜູ້ຕິດເຫຼົ້າ ຫຼື ໃຊ້ສານເສບຕິດ**
ໂທຫາກົມບໍລິການດ້ານການດູແລສຸຂະພາບ (DHCS) ສູນຊັບພະຍາກອນການນຳໃຊ້ສານເຄມີ 24/7 ທີ່ເບີ**1-800-879-2772**
ຫຼື ໄປຍັງ www.dhcs.ca.gov/SUD-NETRL

**ການຊ່ວຍເຫຼືອໃນຍາມວິກິດ**
ໂທຫາ ສາຍດ່ວນຮັບມືການຂ້າຕົວຕາຍ ແລະ ວິກິດ ທີ່ **988**

**ການໃຫ້ຄຳປຶກສາ/ການສະໜັບສະໜູນການຝຶກສອນດ້ານສຸຂະພາບຈິດ**
ໂທ ຫຼື ສົ່ງຂໍ້ຄວາມຫາ **1-833-317-HOPE** (4673) ຫຼື ໄປທີ່
www.calhope.org

**ຮູ້ສິດ ແລະ ຄວາມຮັບຜິດຊອບຂອງທ່ານ**
ໂທເບີ **1-888-452-8609**

DHCS
www.dhcs.ca.gov/kidsandteens



# Medi-Cal for Kids & Teens

## ການບໍລິການປ້ອງກັນ ແລະ ປິ່ນປົວສຳລັບໄວໜຸ່ມ ແລະ ຜູ້ໃຫຍ່ເຖິງອາຍຸ 21 ປີ



# ສະໜອງການບໍລິການMedi-Cal ສໍາລັບໄວໜຸ່ມ ແລະ ຜູ້ໃຫຍ່ເຖິງອາຍຸ 21 ປີ.

**ຖ້າທ່ານມີອາຍຸຕໍ່າກວ່າ 21 ປີ ແລະ ໄດ້ລົງທະບຽນຢູ່ໃນນະໂຍບາຍ Medi-Cal, ທ່ານສາມາດ ໄດ້ຮັບການກວດເຊັກ, ການບໍລິການ, ແລະ ການສະໜັບສະໜູນຕາມທີ່ທ່ານຕ້ອງການທີ່ຈະຊ່ວຍໃຫ້ການເປັນຢູ່ທີ່ດີ ຫຼື ການມີສຸຂະພາບດີ.**

ເຊິ່ງສໍາຄັນທີ່ຈະຕ້ອງໄດ້ໄປກວດສຸຂະພາບປີລະຄັ້ງເພື່ອຊ່ວຍຮັກສາສຸຂະພາບຂອງທ່ານ, ເຖິງແມ່ນວ່າທ່ານຈະບໍ່ເຈັບປ່ວຍ. ພວກເຂົາຍັງສາມາດປ້ອງກັນບັນຫາສຸຂະພາບ, ແລະ ຊອກຫາຊ່ອງງ ແລະ ແກ້ໄຂໄດ້ໄວ.

ເຖິງແມ່ນວ່າທ່ານຫາກໍ່ໄດ້ກວດເຊັກສຸຂະພາບ, ທ່ານຍັງສາມາດນັດພົບແພດໄດ້ທຸກເວລາຕາມທີ່ທ່ານມີຄວາມກັງວົນໃຈດ້ານສຸຂະພາບ.



ທ່ານຄວນໄປພົບໝໍປົວແຂ້ວທຸກໆ 6 ເດືອນ ເພື່ອຮັກສາແຂ້ວຂອງທ່ານໃຫ້ແຂງແຮງ.

## ແຜນການກວດເຊັກສຸຂະພາບຂອງທ່ານ

ໂທຫາແຜນນະໂຍບາຍດູແລທີ່ໄດ້ຮັບການຄຸ້ມຄອງຂອງທ່ານ. ຫຼື ໂທຫາຜູ້ຮັບຜິດຊອບນະໂຍບາຍ Medi-Cal ສາຍດ່ວນສໍາລັບຊ່ວຍເຫຼືອສະມາຊິກຂອງນະໂຍບາຍ Medi-Cal **1-800-541-5555** (TDD 1-800-430-7077). ທ່ານສາມາດໄດ້ຮັບການຊ່ວຍເຫຼືອດັ່ງຕໍ່ໄປນີ້:

- **ຄົ້ນຫາທ່ານໝໍ** ຫຼື ນັດໝາຍ
- **ຂີ່ລົດໄປມາໂດຍບໍ່ເສຍຄ່າ** ໃນການໄປກັບຈາກການນັດພົບຂອງທ່ານ ຫຼື ໄປຮັບຢາ, ອຸປະກອນການແພດ, ແລະ ການເກື້ອກຸນຕ່າງໆ
- **ສະເໜີຂອງການຊ່ວຍເຫຼືອດ້ານພາສາ** ໃນເວລາໄປພົບໝໍ
- **ສະເໜີຂໍການບໍລິການແປພາສາ**

ຖ້າຫາກທ່ານຕ້ອງການໃບປົວດັ່ງກ່າວນີ້ ຫຼື ເອກະສານອື່ນໆຂອງນະໂຍບາຍ Medi-Cal ໃນ**ເລືອກຟໍແມັດ** ເຊັ່ນຟອນໃຫຍ່, ຟໍແມັດສຽງ, CD, ຫຼື ໜັງສືສໍາລັບຄົນພິການ, ຈົ່ງໂທຫາເບີ **1-833-284-0040**.

# ການບໍລິການ Medi-Cal ຄື <u>ການບໍລິການບໍ່ຄິດຄ່າ</u> ສໍາລັບໄວໜຸ່ມ ແລະ ໄວໜຸ່ມສ່ວນໃຫຍ່ຈົນຮອດອາຍຸ 21 ປີ.

ການດູແລທັງໝົດທີ່ທ່ານຕ້ອງການແມ່ນຈະບໍ່ໄດ້ເສຍຄ່າ ເວັ້ນເສຍແຕ່ວ່າທ່ານສາມາດຈ່າຍຄ່າໃຊ້ຈ່າຍໃນເວລາທີ່ທ່ານມີເງື່ອນໄຂຄົບຕາມນະໂຍບາຍ Medi-Cal. ລວມເຖິງການກວດເຊັກ, ການສັກຢາ, ການກວດສຸຂະພາບ ແລະ ການກວດເຊັກທາງຮ່າງກາຍ,ຈິດໃຈ, ການມີເພດສໍາພັນ, ແລະ ບັນຫາສຸຂະພາບແຂ້ວ.

### ການບໍລິການດ້ານສຸຂະພາບທາງເພດສໍາພັນຈະປະກອບມີ:

- ການໃຫ້ຄໍາປຶກສາດ້ານການວາງແຜນຄອບຄົວ ແລະ ໃຫ້ການສຶກສາ
- ການຄຸມກໍາເນີດ ແລະ ການມີລູກນອກໂພກ
- ບໍລິການທໍາແທ້ງ
- ກວດເຊັກ ແລະ ໃຫ້ການປິ່ນປົວພະຍາດຕິດຕໍ່ທາງເພດສໍາພັນ STI
- ການກວດ HIV
- ການດູແລທາງເພດຕາມບົດບາດຍິງຊາຍ

### ການບໍລິການພຶດຕິກໍາດ້ານສຸຂະພາບຈະປະກອບມີ:

- ການປິ່ນປົວສ່ວນບຸກຄົນ, ກຸ່ມຄົນ, ແລະ ຄອບຄົວ
- ການໃຫ້ຄໍາປຶກສາກ່ຽວກັບວິກິດການ
- ການຄຸ້ມຄອງສໍານວນ
- ຢາສໍາລັບເງື່ອນໄຂທາງດ້ານສຸຂະພາບຈິດ
- ກວດເຊັກອາການຊຶມເສົ້າ ແລະ ຄວາມກັງວົນ
- ການບໍລິການປິ່ນປົວຜູ້ເສບຢາເສບຕິດ ແລະ ຕິດເຫຼົ້າ



# ນະໂຍບາຍ Medi-Cal ສໍາລັບເດັກນ້ອຍ ແລະ ໄວລຸ້ນຈະກວມເອົາການບໍລິການເພື່ອຈັດການ ແລະ ປິ່ນປົວບັນຫາສຸຂະພາບ

**ຖ້າຫາກທ່ານໝໍພົບວ່າສຸຂະພາບທາງດ້ານຮ່າງກາຍ, ຈິດໃຈ, ຫຼື ແຂ້ວ ຄວາມກັງວົນໃຈທີ່ຕ້ອງການໃນການປິ່ນປົວ ຫຼື ໄດ້ຮັບການຄຸ້ມຄອງ,ນະໂຍບາຍ Medi-Cal ຈະຕ້ອງໄດ້ສະໜອງ ແລະ ຄຸ້ມຄອງການດູແລສຸຂະພາບທີ່ຈໍາເປັນ.**



### ການດູແລທີ່ໄດ້ຮັບຄຸ້ມຄອງໂດຍນະໂຍບາຍ Medi-Cal ສໍາລັບເດັກນ້ອຍ ແລະ ໄວລຸ້ນ:

- ການບໍລິການດ້ານສຸຂະພາບທາງດ້ານກາຍຍະພາບ, ລວມທັງການດູແລປະຖົມພະຍາບານເບື້ອງຕົ້ນ ແລະ ການໄປພົບທ່ານໝໍຜູ້ຊ່ຽວຊານ
- ການບໍລິການສຸຂະພາບຈິດ ແລະ ສິ່ງເສບຕິດ ຫຼື ການຕິດເຫຼົ້າ, ລວມທັງການປິ່ນປົວ
- ບໍລິການ ກວດເຊັກ ແລະ ຕິດຕາມສຸຂະພາບແຂ້ວ
- ບໍລິການດ້ານສາຍຕາ, ລວມທັງແວ່ນຕາ
- ບໍລິການໄດ້ຍິນສຽງ
- ກວດເຊັກ ແລະ ໃຫ້ການປິ່ນປົວ COVID-19
- ອຸປະກອນການແພດ ແລະ ການສະໜອງໝລວມທັງຕັ່ງເລື່ອນ, ອຸປະກອນການແພດທີ່ໃຊ້ເປັນໄລຍະ
- ການນໍາໃຊ້ຢາປົວພະຍາດ
- ກວດເຊັກໃນຫ້ອງທົດລອງ, ລວມທັງການການກວດ STI, ແລະ ການດູແລຈໍາເປັນຕ້ອງໄດ້ຕິດຕາມໃຫ້ການດູແລ
- ການບໍລິການສຸຂະພາບໄວຈະເລີນພັນ ແລະ ສຸຂະພາບການມີເພດສໍາພັນ
- ການປິ່ນປົວທາງດ້ານກາຍຍະພາບ, ອາຊີບ, ແລະ ການປາກເວົ້າ
- ກວດເຊັກການຖືພາ
- ການບໍລິການດ້ານສຸຂະພາບຢູ່ທີ່ບ້ານ, ລວມທັງການດູແລດ້ານພະຍາບານ
- ການປິ່ນປົວໃນໂຮງໝໍ ແລະ ສະຖານທີ່ປິ່ນປົວຕ່າງໆ
- ການບໍລິການອື່ນໆທີ່ຈໍາເປັນ, ຕາມຜູ້ໃຫ້ບໍລິການຈະພິຈາລະນາ